The Commonwealth of Massachusetts
Executive Office of Labor and Workforce Development
Department of Unemployment Assistance



# 10 ຢ່າງທີ່ທ່ານຄວນຮູ້...

## ກ່ຽວກັບລະບົບປະກັນໄພຫວ່າງງານ ເມື່ອຂໍເອົາເງິນຜົນປະໂຫຍດຫວ່າງງານປະຈຳອາທິດຂອງທ່ານ

ປະກັນໄພຫວ່າງງານ (UI) ໃຫ້ການຊ່ວຍເຫຼືອດ້ານການເງິນຊົ່ວຄາວແກ່ບຸກຄົນທີ່ມີເງື່ອນໄຂຄົບຖ້ວນທີ່ເສັຽວຽກເຮັດງານທຳຂອງຕົນ ທີ່ບໍ່ໄດ້ເກີດຈາກຄວາມຜິດຂອງເຂົາເຈົ້າເອງ ແລະຜູ້ທີ່ສືບຕໍ່ມີເງື່ອນໄຂຄົບຖ້ວນຕາມຂໍ້ກຳນົດໃນການມີສິດໄດ້ຮັບເງິນຊ່ວຍເຫຼືອ UI ຂອງລັດ Massachusetts.

ໂຄງການນີ້ບໍ່ແມ່ນມີໄວ້ໃຫ້ສຳລັບທຸກຄົນທີ່ເສັຽວຽກເຮັດງານທຳ.

ຈົ່ງຈົດຈຳຂໍ້ມູນສິບຂໍ້ນີ້ໄວ້ໃນເວລາທ່ານຍື່ນຄຳຮ້ອງຂໍເອົາການຊ່ວຍເຫຼືອ UI ເພື່ອຮັບປະກັນການເບີກຈ່າຍເງິນຊ່ວຍເຫຼືອ ຢ່າງຖືກຕ້ອງ ແລະວ່ອງໄວ.

1. **ພ້ອມທີ່ຈະເຮັດວຽກ.** ເພື່ອຂໍເອົາເງິນຊ່ວຍເຫຼືອ, ທ່ານຕ້ອງພິສູດໃຫ້ເຫັນຢ່າງຕໍ່ເນື່ອງວ່າ ທ່ານສາມາດ, ພ້ອມ ແລະ ຍິນດີຮັບເອົາວຽກເຮັດທີ່ເໝາະສົມ.

2. **ຊອກຫາວຽກເຮັດຢ່າງຈິງຈັງ.** ທ່ານຕ້ອງຊອກຫາວຽກເຮັດໃນແຕ່ລະອາທິດ ຖ້າບໍ່ດັ່ງນັ້ນ ເງິນຊ່ວຍເຫຼືອຈະຖືກປະຕິເສດ.

3. **ແຈ້ງຄ່າຈ້າງຕ່າງໆທີ່ທ່ານກຳລັງຫາໄດ້.** ທ່ານຕ້ອງແຈ້ງຄ່າຈ້າງລວມຍອດຂອງທ່ານສຳລັບແຕ່ລະອາທິດທີ່ທ່ານເຮັດວຽກ. ແຈ້ງເງິນລາຍຮັບທຸກໆຢ່າງ –ລວມທັງວຽກທີ່ເຮັດບໍ່ເຕັມເວລາ ຫຼື ວຽກຊົ່ວຄາວ.

4. **ທັນທີທີ່ທ່ານເລີ່ມເຮັດວຽກອີກ, ໃຫ້ຢຸດຮ້ອງຂໍເອົາເງິນຊ່ວຍເຫຼືອ.** ທ່ານບໍ່ສາມາດຂໍເອົາເງິນຊ່ວຍເຫຼືອ UI ຫຼັງຈາກທ່ານໄດ້ເລີ່ມເຮັດວຽກຄືນອີກ ໂດຍບໍ່ກ່ຽວຂ້ອງວ່າທ່ານຈະໄດ້ຮັບການຈ່າຍເງິນຄ່າຈ້າງແລ້ວຫຼືຍັງ.

5. **ແຈ້ງເຫດຜົນທີ່ທ່ານຖືກຫວ່າງງານຢ່າງຖືກຕ້ອງ. ທ່ານຕ້ອງໄດ້ແຈ້ງເຫດຜົນຂອງການຖືກໃຫ້ອອກຈາກວຽກຢ່າງຖືກຕ້ອງແມ່ນຢຳ.** ຖ້າທ່ານໄດ້ທຳການຂໍເອົາເງິນຊ່ວຍເຫຼືອຂອງທ່ານຄືນອີກ.

6. **ລົງທະບຽນນຳສູນບໍລິການດ້ານວຽກເຮັດປະຕູດຽວຂອງລັດ Massachusetts.** ເພື່ອໃຫ້ມີສິດໄດ້ຮັບເງິນຊ່ວຍເຫຼືອ, ທ່ານຈຳເປັນຕ້ອງເຂົ້າຮ່ວມການສຳມະນາຂອງສູນບໍລິການດ້ານວຽກເຮັດ ບ່ອນທີ່ທ່ານຈະໄດ້ຮຽນຮູ້ກ່ຽວກັບແຫລ່ງການຊ່ວຍເຫລືອທີ່ມີຢູ່ເພື່ອຊ່ວຍໃຫ້ທ່ານໄດ້ຮັບການຈ້າງງານຄືນໃໝ່ອີກ.

7. **ສ້າງແຜນຊອກວຽກເຮັດທີ່ມີປະສິດທິຜົນ.** ຕິດຕໍ່ຫາສູນບໍລິການວຽກເຮັດງານທຳໃນເຂດທ້ອງຖິ່ນ ເພື່ອຂໍຄວາມຊ່ວຍເຫຼືອໃນການວາງແຜນຊອກຫາວຽກເຮັດງານທຳຢ່າງມີປະສິທິຜົນ.

8. **ຫຼີກລ້ຽງຂໍ້ຜິດພາດແລະຮັບປະກັນການຈ່າຍເງິນຊ່ວຍເຫຼືອຢ່າງຖືກຕ້ອງ.** ເພື່ອປ້ອງກັນຂໍ້ຜິດພາດທີ່ອາດຈະພາໃຫ້ເກີດການໄດ້ຮັບເງິນຫວ່າງງານເກີນ, ຈົ່ງອ່ານທຸກຂໍ້ມູນທີ່ສະໜອງໃຫ້ແກ່ທ່ານ.

9. **ປະຕິບັດຕາມກົດລະບຽບເພື່ອປ້ອງກັນຕົວທ່ານຈາກເຮັດການສໍ້ໂກງ.** ໃຜກໍ່ຕາມທີ່ຂໍເອົາເງິນຊ່ວຍເຫຼືອ UI ແມ່ນມີຄວາມຮັບຜິດຊອບຕາມກົດໝາຍໃນການປະຕິບັດຕາມກົດລະບຽບຕ່າງໆ. ການບໍ່ປະຕິບັດກົດລະບຽບນັ້ນ ສາມາດມີຜົນຕາມມາທີ່ຮຸນແຮງ, ລວມ ທັງການຖືກປັບໃໝ, ລົງໂທດ ແລະຈຳຄຸກ.

10. **ຮູ້ຄວາມຮັບຜິດຊອບຂອງທ່ານ ແລະຂໍຄວາມຊ່ວຍເຫຼືອ.** ການກວດເບິ່ງຂໍ້ມູນຜ່ານລະບົບ UI ສາມາດເປັນເລື້ອງສັບສົນໄດ້. ຖ້າທ່ານມີຄຳຖາມ, ໃຫ້ຕິດຕໍ່ຫາພະແນກຊ່ວຍເຫຼືອການຫວ່າງງານລັດ Massachusetts ເພື່ອຂໍຄວາມຊ່ວຍເຫຼືອ.

## ຂໍ້ມູນເພີ້ມເຕີມ ໂປດເບິ່ງໃນເວັບໄຊ

**www.mass.gov/dua ຫລື ໂທ 617-626-6800. ພວກເຮົາຢູ່ທີ່ນີ້ ເພື່ອຊ່ວຍທ່ານ.**